ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0451 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 01 ມີນາ 2012

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບການຂໍອະນຸຍາດນຳເຂົ້າໄມ້

- ອີງຕາມ ດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011;
- ອີງຕາມ ດຳລັດວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009.

ລັດຖະມົນຕີ ວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດລະບຽບການຂໍອະນຸຍາດນຳເຂົ້າໄມ້ ມາ ສປປ ລາວ ແລະ ເພື່ອເກັບກຳຂໍ້ມູນສະຖິຕິໃນການນຳເຂົ້າ ໂດຍຜ່ານລະບອບການອອກໃບອະນຸຍາດແບບອັດຕະໂນມັດ, ແຕ່ບໍ່ໄດ້ນຳໃຊ້ໃນການຈຳກັດປະລິມານ ຫຼື ມູນຄ່າໃນການນຳເຂົ້າ.

**ມາດຕາ 2 ອະທິບາຍສັບ**

ໃນຂໍ້ຕົກລົງສະບັບນີ້ "ໄມ້" ໝາຍເຖິງ ໄມ້ທ່ອນ, ຕໍໄມ້, ປູດໄມ້, ໄມ້ແປຮູບ ແລະ ໄມ້ເຄິ່ງສຳເລັດຮູບ ຊຶ່ງໄດ້ລະບຸໄວ້ໃນໝວດລະຫັດເລົ້າ 4403, 4407.10 – 4407.28, 0601 ຂອງສາລະບານອັດຕາພາສີຂອງ ສປປ ລາວ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ການນຳເຂົ້າໄມ້ ຢູ່ ສປປ ລາວ.

## ໝວດທີ 2
## ລະບຽບການຂໍອະນຸຍາດນໍາເຂົ້າໄມ້

**ມາດຕາ 4 ສິດ ແລະ ເງື່ອນໄຂໃນການນໍາເຂົ້າໄມ້**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ມີສິດນໍາເຂົ້າໄມ້ ໂດຍຕ້ອງປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 5 ການຂໍອະນຸຍາດນໍາເຂົ້າໄມ້**

ການນໍາເຂົ້າໄມ້ ຕ້ອງໄດ້ຮັບໃບອະນຸຍາດນໍາເຂົ້າຈາກ ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ.

**ມາດຕາ 6 ເອກະສານປະກອບຂໍອະນຸຍາດນໍາເຂົ້າໄມ້**

ເອກະສານທີ່ຕ້ອງປະກອບ ເພື່ອຂໍອະນຸຍາດນໍາເຂົ້າໄມ້ມີດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດນໍາເຂົ້າ;
2. ສໍາເນົາຂອງເອກະສານຕາມແຕ່ລະກໍລະນີ:
   - ໃບທະບຽນວິສາຫະກິດ ຫຼື ໃບທະບຽນສໍາປະທານທີ່ຖືກຕ້ອງຕາມລະບຽບກົດໝາຍ (ສໍາລັບວິສາຫະກິດ ທີ່ ຢູ່ ສປປ ລາວ);
   - ໃບທະບຽນວິສາຫະກິດອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງທີ່ຖືກຕ້ອງຕາມລະບຽບກົດໝາຍ (ສໍາລັບວິສາຫະກິດທີ່ບໍ່ຢູ່ ສປປ ລາວ);
3. ໃບອະນຸຍາດສົ່ງອອກໄມ້ຈາກປະເທດຕົ້ນທາງ (ຖ້າມີ);
4. ບັນຊີໄມ້ (Log List).

ໃນກໍລະນີ ເອກະສານເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຈາກ ສໍານັກງານທະບຽນສານຂອງ ສປປ ລາວ.

**ມາດຕາ 7 ໃບອະນຸຍາດນໍາເຂົ້າໄມ້**

ການອອກ, ການປ່ຽນແປງ ແລະ ອາຍຸ ຂອງໃບອະນຸຍາດນໍາເຂົ້າໄມ້ ໃຫ້ປະຕິບັດຕາມດໍາລັດ 180/ນຍ, ລົງວັນທີ 7 ມິຖຸນາ 2009 ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນໍາເຂົ້າສິນຄ້າ. ໃບອະນຸຍາດນໍາເຂົ້າໄມ້ບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

**ມາດຕາ 8 ຄ່າທໍານຽມ ແລະ ຄ່າບໍລິການ**

ຄ່າທໍານຽມ ແລະ ຄ່າບໍລິການ ສໍາລັບການອອກ ແລະ ການປ່ຽນແປງ ຂອງໃບອະນຸຍາດນໍາເຂົ້າໄມ້ ແມ່ນໃຫ້ອີງຕາມລັດຖະບັນຍັດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ.

**ມາດຕາ 9 ການສະໜອງເອກະສານໃນເວລານຳເຂົ້າໄມ້ເພື່ອປຸງແຕ່ງຕົວຈິງ**

ໃນເວລານຳເຂົ້າໄມ້ຕົວຈິງ, ຜູ້ນຳເຂົ້າຕ້ອງສະແດງເອກະສານດັ່ງຕໍ່ໄປນີ້ໃຫ້ແກ່ ເຈົ້າໜ້າທີ່ພາສີ:

1. ໃບອະນຸຍາດນຳເຂົ້າທີ່ອອກພາຍໃຕ້ຂໍ້ຕົກລົງສະບັບນີ້; ແລະ
2. ເອກະສານອື່ນໆຕາມລະບຽບການທາງພາສີ.

## ໝວດທີ 3
## ບົດບັນຍັດສຸດທ້າຍ

**ມາດຕາ 10 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 30 ວັນນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ,

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ດຣ. ນາມ ວິຍະເກດ.